ໂທຣຫາພວກເຮົາໄດ້ຟຣີ:

**1-800-511-2300**

ຫຼືຢ້ຽມຊົມເວັບໄຊ:

**dhcs.ca.gov/OPL**

ພາສາອັງກິດ, ສະເປນ, ອາຣາບິກ, ອາເມເນັຽ, ກຳປູເຈັຽ/ຂະເໝນ, ຈີນ, ຟາຊີ, ຮິນດູ, ມົ້ງ, ຍີ່ປຸ່ນ, ເກົາຫຼີ, ລາວ, ຈີນກາງແມນດາຣິນ, ປັນຈາບ, ຣັດເຊັຽ, ຕາກາລັອກ, ໄທ, ແລະວຽດນາມ.
(ຕະຫຼອດ 24 ຊົ່ວໂມງ ທຸກວັນ)

## ເພື່ອຮັບເອົາການກວດທົດສອບໂດຍບໍ່ເສັຽຄ່າ ເພື່ອກວດຫາມະເຮັງເຕົ້ານົມ ແລະມະເຮັງປາກມົດລູກເຫຼົ່ານີ້, ທ່ານຕ້ອງ:

- ອາໄສຢູ່ໃນຣັຖຄາລິຟໍເນັຽ.
- ມີເງື່ອນໄຂກົງຕາມຂໍ້ກຳນົດດ້ານອາຍຸ.
- ບໍ່ມີປະກັນພັຍສຸຂະພາບ ຫຼືມີແບບຈຳກັດ.
- ມີປະກັນພັຍສຸຂະພາບພ້ອມກັບມີຄ່າຈ່າຍຮ່ວມ ຫຼື ຄ່າຈ່າຍສຳລັບຄ່າເສັຽຫາຍສ່ວນທຳອິດຊຶ່ງທ່ານບໍ່ສາມາດຈ່າຍໄດ້.
- ມີລາຍໄດ້ຄົວເຮືອນຕ່ຳ.

## ຄຳຖະແຫຼງວ່າດ້ວຍການບໍ່ຈຳແນກບຸກຄົນ

ກົມບໍລິການດູແລສຸຂະພາບຣັຖຄາລິຟໍເນັຽປະຕິບັດຕາມກົດໝາຍວ່າດ້ວຍສິດທິພົນລະເມືອງຂອງຣັຖບານກາງທີ່ກ່ຽວຂ້ອງ
ແລະບໍ່ຈຳແນກບຸກຄົນໂດຍອີງໃສ່ເຊື້ອຊາດ, ສີຜິວ, ຊາດກຳເນີດ, ອາຍຸ, ຄວາມພິການ, ຫຼື ເພດ.

ການບໍລິການຊ່ວຍເຫຼືອດ້ານພາສາ

Si habla español, usted puede conseguir ayuda para entender este documento, hablando con su proveedor de atención primaria del programa EWC o llamando al Contratista Regional de su condado. Los teléfonos del Contratista Regional se encuentran abajo. Esta asistencia lingüística es gratis.

如果您說漢語，我們可以幫助您瞭解這份文檔。請諮詢您所在地EWC附近診所或當地負責聯絡人。當地負責人電話見下文，他們會免費提供說明服務。

PLACE LABEL HERE

Every Woman Counts

DHCS

**1-800-511-2300**
**dhcs.ca.gov/EWC**

© 2017 Department of Health Care Services. All Rights Reserved.

Loation 8/2017

# ໂຄງການຊ່ວຍເຫຼືອ ຜູ້ຍິງທຸກຄົນ

ກວດກັ່ນຕອງມະເຮັງເຕົ້ານົມ ແລະມະເຮັງປາກມົດລູກໂດຍບໍ່ເສັຽຄ່າ

## ໂຄງການຊ່ວຍເຫຼືອຜູ້ຍິງທຸກຄົນ ແມ່ນຫຍັງ?

ໂຄງການຊ່ວຍເຫຼືອຜູ້ຍິງທຸກຄົນ (Every Woman Counts) ແມ່ນຫຍັງແມ່ນໃຫ້ບໍລິການກວດກັ່ນຕອງມະເຮັງເຕົ້ານົມ ແລະມະເຮັງປາກມົດລູກ ແລະການບໍລິການຕິດຕາມຜົນ. ນີ້ແມ່ນລວມເຖິງ ການກວດເຕົ້ານົມໃນທາງການແພດ, ການກວດແມັມໂມແກຣມ, ແລະການກວດເຍື່ອເມືອກຂອງປາກມົດລູກ (Pap tests) ໃຫ້ແກ່ບັນດາຜູ້ຍິງທີ່ມີເງື່ອນໄຂເໝາະສົມໃນຣັຖຄາລິຟໍເນັຽ.

ເມື່ອຜູ້ຍິງອາຍຸຫຼາຍຂຶ້ນ, ໂດຍສະເພາະຫຼັງຈາກອາຍຸ 50 ປີ, ໂອກາດໃນການເປັນມະເຮັງເຕົ້ານົມ ແລະມະເຮັງປາກມົດລູກແມ່ນສູງຂຶ້ນ.ຜູ້ຍິງຄວນຮັບການກວດກັ່ນຕອງເປັນປະຈຳເພື່ອໃຫ້ໝໍກວດເບິ່ງມະເຮັງເຕົ້ານົມ ແລະມະເຮັງປາກມົດລູກ.



## ເປັນຫຍັງທ່ານຈຶ່ງຄວນຮັບການກວດກັ່ນຕອງມະເຮັງເຕົ້ານົມ?

- ການກວດເຕົ້ານົມເປັນການຊ່ວຍໃຫ້ທ່ານໝໍເບິ່ງ ຫຼື ຮູ້ສຶກເຖິງການປ່ຽນແປງໃດໆ ໃນເຕົ້ານົມຂອງທ່ານ.
- ການກວດແມັມໂມແກຣມສາມາດຫາມະເຮັງເຕົ້ານົມທີ່ມີຂະໜາດເລັກເກີນໄປທີ່ທ່ານ ຫຼື ທ່ານໝໍຂອງທ່ານຈະຮູ້ສຶກໄດ້.
- ເມື່ອມະເຮັງເຕົ້ານົມຖືກຄົ້ນພົບແຕ່ຫົວທີ, ມັນກໍຈະງ່າຍທີ່ຈະປິ່ນປົວ.

## ທ່ານຄວນໄປຮັບການກວດກັ່ນຕອງມະເຮັງເຕົ້ານົມເລື້ອຍປານໃດ?

ຖ້າວ່າ ທ່ານອາຍຸ 40 ປີຂຶ້ນໄປ ຂໍໃຫ້ປຶກສາກັບທ່ານໝໍຂອງທ່ານກ່ຽວກັບວ່າເມື່ອໃດ ແລະເລື້ອຍປານໃດທີ່ທ່ານຄວນຈະໄປຮັບການກວດຫາມະເຮັງເຕົ້ານົມ.

## ໂຄງການ ໂຄງການຊ່ວຍເຫຼືອຜູ້ຍິງທຸກຄົນ ສະເໜີໃຫ້ຟຣີສຳລັບ:

- ການກວດເຕົ້ານົມໃນທາງການແພດ ແລະການກວດແມັມໂມແກຣມ ແກ່ຜູ້ຍິງທີ່ອາຍຸ 40 ປີຂຶ້ນໄປ.
- ການກວດກັ່ນຕອງແກ່ບັນດາຜູ້ຍິງທີ່ມີອາການທີ່ອາຍຸຕ່ຳກວ່າ 40 ປີ. (ເບິ່ງສັນຍານເຕືອນຂ້າງລຸມນີ້ )
- ການກວດເຍື່ອເມືອກຂອງປາກມົດລູກໃຫ້ແກ່ບັນດາຜູ້ຍິງທີ່ອາຍຸ 21 ປີຂຶ້ນໄປ.
- ການກວດເຍື່ອເມືອກຂອງປາກມົດລູກ ແລະ HPV ຮ່ວມກັນໃຫ້ແກ່ຜູ້ຍິງທີ່ອາຍຸ 30 ປີຂຶ້ນໄປ.
- ການກວດທົດສອບເພື່ອຕິດຕາມຜົນ ຖ້າວ່າຈຳເປັນ.

### ສັນຍານເຕືອນ ແລະ/ຫຼື ອາການບາງຢ່າງຂອງມະເຮັງເຕົ້ານົມ ລວມມີ:

- ກ້ອນເນື້ອທີ່ສາມາດຈັບໄດ້, ຮອຍໃຄ່ ຫຼື ອາການບວມໃນເຕົ້ານົມ ຫຼື ໃນຂີ້ແຮ້;
- ເຕົ້ານົມມີຂະໜາດ ຫຼື ຮູບຮ່າງປ່ຽນແປງໄປ;
- ເນື້ອຜິວແລະສີຜິວຂອງເຕົ້ານົມ ຫຼື ຫົວນົມມີການປ່ຽນແປງ (ຮອຍບຸ່ມ, ຮອຍຍິ່ນ, ມີສີແດງ, ຜິວໜັງເປັນເກັດ, ຫຼື ໜາຂຶ້ນ);
- ຫົວນົມບຸ່ມເຂົ້າໄປ;
- ມີສານຄັດຫຼັ່ງໄຫຼອອກຈາກຫົວນົມ; ແລະ/ຫຼື
- ເຈັບເຕົ້ານົມ.

ກະຣຸນາຮັບຮູ້ວ່າ ສັນຍານ ແລະ/ຫຼື ອາການເຕືອນຕ່າງໆ ອາດເກີດຂຶ້ນຈາກຄ ວາມເຈັບປ່ວຍອື່ນໆ ທີ່ບໍ່ແມ່ນມະເຮັງເຕົ້ານົມ.

**1-800-511-2300**
**dhcs.ca.gov/OPL**

## ເປັນຫຍັງທ່ານຈຶ່ງຄວນຮັບການກວດກັ່ນຕອງມະເຮັງປາກມົດລູກ?

- ການກວດກັ່ນຕອງມະເຮັງປາກມົດລູກແມ່ນການກວດທົດສອບເຍື່ອເມືອກຂອງປາກມົດລູກ (Pap tests) ແລະການທົດສອບ HPV.
- ການກວດເຍື່ອເມືອກຂອງປາກມົດລູກແມ່ນການເບິ່ງການປ່ຽນແປງຂອງຈຸລັງໃນປາກມົດລູກທີ່ອາດນຳໄປສູ່ມະເຮັງ.
- ການທົດສອບ HPV ແມ່ນການເບິ່ງໄວຣັສທີ່ສາມາດເຮັດໃຫ້ເກີດການປ່ຽນແປງຂອງຈຸລັງໃນປາກມົດລູກ.
- ການປິ່ນປົວການປ່ຽນແປງຂອງຈຸລັງເຫຼົ່ານີ້ສາມາດຊ່ວຍປ້ອງກັນມະເຮັງປາກມົດລູກໄດ.



## ທ່ານຄວນໄປຮັບການກວດກັ່ນຕອງມະເຮັງປາກມົດລູກເລື້ອຍປານໃດ?

ໂຄງການ ໂຄງການຊ່ວຍເຫຼືອຜູ້ຍິງທຸກຄົນ ສະເໜີການກວດທົດສອບເຍື່ອເມືອກຂອງປາກມົດລູກໂດຍບໍ່ເສັຽຄ່າໃຫ້ແກ່ບັນດາຜູ້ຍິງທີ່ອາຍຸ 21 ປີຂຶ້ນໄປ ຊຶ່ງມີເງື່ອນໄຂເໝາະສົມ, ແລະ ຈາກນັ້ນ ກວດທຸກສາມປີ ຖ້າວ່າ ຜົນການກວດປົກກະຕິ.ຜູ້ຍິງທີ່ອາຍຸ 30 ປີຂຶ້ນໄປອາດເລືອກທີ່ຈະກວດເຍື່ອເມືອກຂອງປາກມົດລູກພ້ອມກັບການກວດ HPV ຖ້າວ່າລາວຕອງການເພີ່ມການກວດກັ່ນຕອງເປັນ 5 ປີ. ຖ້າວ່າ ຜົນການກວດທັງສອງອອກມາປົກກະຕິ, ໂອກາດທີ່ຈະເປັນມະເຮັງປາກມົດລູກໃນລະຍະສອງສາມປີຂ້າງໜ້າແມ່ນຕ່ຳຫຼາຍ.